ສຳນັກງານໃຫຍ່

ເລກທີ: 023 /ທຄຕລ 2021
ນະຄອນຫຼວງວຽງຈັນ, ວັນທີ: 09 FEB 2021

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ, ໂຮງພິມ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາ ປຶ້ມບັນທຶກປົກແຂງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ) ເພື່ອເຂົ້າຮ່ວມການປະມູນລາຄາ ປຶ້ມບັນທຶກປົກແຂງ ທີ່ ທຄຕລ ຈະນຳໃຊ້ເປັນເຄື່ອງທີ່ລະນຶກໃຫ້ແກ່ລູກຄ້າຂອງທຄຕລ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສິນຄ້າ | ຈຳນວນ |
|---|---|---|---|
| 1 | ປຶ້ມບັນທຶກ ປົກແຂງ | - ຂະໜາດ A5 ,ໃສ່ຢ່ອງສີຂາວ, ຂອບປຶ້ມລົບລ່ຽມ<br>- ໜ້າ + ຫຼັງ ປົກແຂງ ພິມສີດ້ານ, ເຈ້ຍກາກຕົງ ເບີ 24, ສຳລັບຄຳວ່າ: ທຄຕລ & BCEL ແມ່ນເຈາະຊອດ.<br>- ເຈ້ຍທາງໃນ (ໂຄສະນາຜະລິດຕະພັນ) ໃຊ້ເຈ້ຍອາດມັນ 120 ກຼາມ 10 ໜ້າ.<br>- ເຈ້ຍປອນຂາວໃຊ້ຂຽນ 80 ກຼາມ 150 ໜ້າ (ບໍ່ລວມໜ້າປົກ)<br><br> | 10.000 ຫົວ |

- **ເງື່ອນໄຂຂອງຜູ້ສະໜອງ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບມີດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ແລະ ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ ພ້ອມສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019 ແລະ ປີ 2020 (ຖ້າມີ).
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນີ້, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ, ພ້ອມທັງຄັດຕິດຕົວຢ່າງສິນຄ້າຕາມສະເປັກຂັ້ນເທິງຕິດຄັດມາສົ່ງກ່ອນ **ວັນອັງຄານ ວັນທີ 09/03/2021 ເວລາ 11:00 ໂມງ.**

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>.**

1. ໃບສະເໜີລາຄາໃຫ້ລະບຸລາຄາ/ຫົວໜ່ວຍ ແລະ ລວມອາກອນມູນຄ່າເພີ່ມ 10% (ມີບິນອາກອນຄົບຖ້ວນ) ທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນສຸກ ວັນທີ **12/03/2021 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນ ເຊິ່ງຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ແລະ ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງຊ່ອງໜ້າກັບຄະນະກຳມະການ).
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 12/04/2021)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ບໍ່ປະກອບເອກະສານຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ການຊຳລະຈະຈ່າຍເປັນງວດດຽວ 100% ຂອງມູນຄ່າພາຫລັງສົ່ງສິນຄ້າຖືກຕ້ອງ ແລະ ຄົບຖ້ວນ.**

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ແຫ່ງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫລວງ

**ພູຂົງ ຈັນທະຈັກ**

ສອບຖາມລາຍລະອຽດເພີ່ມເຕີມ: bidcommittee@bcel.com.la

ທ່ານ ນ. ວັນມີນາ ລໍຄຳຈັນ 020 59333349, ທ່ານ ນ. ເພັດສົມພອນ ຍອຍບົວກ່ອງ 02056800008